ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທຫລ ເຂົ້າຮ່ວມພິທີໂຮມຊຸມນຸມໃຫຍ່ ສະເຫຼີມສະຫຼອງວັນສ້າງຕັ້ງ ສະຫະພັນກຳມະບານລາວ ຄົບຮອບ 70ປີ ( 1 ກຸມພາ 1956 - 1 ກຸມພາ 2026)




ໃນວັນທີ 2 ກຸມພາ 2026, ຄະນະບໍລິຫານງານ ສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມວາງກະຕ່າດອກໄມ້ ທີ່ດາວແດງ ແລະ ຫໍພິພິດຕະພັນ ໄກສອນ ພົມວິຫານ ເພື່ອລະນຶກເຖິງຄຸນງາມຄວາມດີ ແລະ ການເສຍສະຫຼະຊີວິດ ເພື່ອອຸທິດຕົນໃນການຕໍ່ສູ້ປົດປ່ອຍຊາດປະຊາທິປະໄຕ.

ຫຼັງຈາກນັ້ນ ທຫລ ນໍາພາໂດຍ ສະຫາຍ ສຸລິສັກ ທຳນຸວົງ ກຳມະການປະຈຳພັກ-ຮອງຜູ້ວ່າການ ທຫລ ພ້ອມດ້ວຍ ຄະນະບໍລິຫານງານສະຫະພັນກຳມະບານ ທຫລ, ຕາງໜ້າຮາກຖານ ແລະ ໜ່ວຍກຳມະບານ ປີ້ນອ້ອມ ທຫລ ຈຳນວນ 15 ສະຫາຍ ເຂົ້າຮ່ວມພິທີໂຮມຊຸມນຸມໃຫຍ່ ສະເຫຼີມສະຫຼອງວັນສ້າງຕັ້ງ ສະຫະພັນກຳມະບານລາວ ຄົບຮອບ 70 ປີ ຢູ່ທີ່ ຫໍປະຊຸມແຫ່ງຊາດ ຊຶ່ງໃນພິທີດັ່ງກ່າວ ໄດ້ຮັບຊົມສິລະປະວັນນະຄະດີ, ຮັບຟັງມູນເຊື້ອ 70ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສະຫະພັນກຳມະບານລາວ ແລະ ໄດ້ເປັນກຽດຢ່າງສູງທີ່ໄດ້ຮັບຟັງການກ່າວສູນທອນພົດ ວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 70 ປີ ຈາກພະນະທ່ານ ສາດສະດາຈານ ປອ. ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ , ປະທານສູນກາງແນວລາວສ້າງຊາດ. ຫຼັງຈາກນັ້ນ ກໍ່ໄດ້ເຂົ້າ ຮ່ວມກິດຈະກຳຫຼາຍວາລະທີ່ສຳຄັນທີ່ໄດ້ຈັດຂຶ້ນ.





ຂ່າວ: ທະນາຄານແຫ່ງ ສປປ ລາວ

ຢູ່ເມືອງລາວໃຊ້ເງິນກີບລາວ